# ຖະແຫຼງຂ່າວ

**ລັດທະບານ ແລະ ຄູ່ຮ່ວມພັດທະນາ ກຽມຕົວ ຮັບມື ກັບ**

**ການຟື້ນຕົວຄືນ ຫຼັງຈາກໄພພິບັດ ໃນ ກອງປະຊຸມໂຕະມົນ ປີນີ້**

**ວຽງຈັນ ວັນທີ 21/11/2018 –** ເວທີ ສົນທະນາ ການຮ່ວມມື ແລະ ນະໂຍບາຍ ຂອງ ສ.ປ.ປ. ລາວ, ກອງປະຊຸມໂຕະມົນປະຈຳປີ ຈະໄດ້ຈັດຂຶ້ນ ທີ່ນະຄອນຫຼວງວຽງຈັນ ໃນວັນທີ 4-5 ທັນວາ. ຂະບວນການກະກຽມ ກອງປະຊຸມໂຕະມົນ ໄດ້ຮັບການນຳພາຈາກ ກະຊວງ ແຜນການ ແລະ ການລົງທຶນ ໂດຍ ນຳເອົາ ອົງການຈັດຕັ້ງ ຂອງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ເພື່ອສົນທະນາປຶກສາຫາລື ຄວາມຄືບ ໜ້າ ແລະ ວິທີທີ່ຈະເພີ່ມຜົນປະໂຫຍດສູງສຸດ ຂອງ ການຮ່ວມມື ເພື່ອການພັດທະນາຂອງ ສ.ປ.ປ. ລາວ.

ໃນປີນີ້, ການປຶກສາຫາລື ໃນ ກອງປະຊຸມໂຕະມົນ ຈະເນັ້ນໃສ່ ການທົບທວນຄືນ ໃນໄລຍະກາງ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 8 (NSEDP, 2016-2021), ເຊິ່ງມີເປົ້າໝາຍ ໃຫ້ ສ.ປ.ປ. ລາວ ອອກຈາກສະຖານະພາບ ຂອງການເປັນປະເທດດ້ອຍພັດທະນາ. ກອງປະຊຸມດັ່ງກ່າວ ຍັງຈະໄດ້ພິຈາລະນາ ຜົນກະທົບ ຂອງ ໄພນ້ຳຖ້ວມ ທີ່ມີຕໍ່ເສດຖະກິດຂອງປະເທດ ແລະ ການດຳລົງຊີວິດຂອງປະຊາຊົນ, ລວມທັງ ຜົນໄດ້ຮັບ ຈາກ ການປະເມີນຄວາມຕ້ອງການ ຫຼັງໄພພິບັດ ທີ່ໄດ້ຖືກຈັດຂຶ້ນ ໂດຍການປະສານງານ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄະນະກຳມະການ ປ້ອງກັນໄພພິບັດ ແລະ ຄວບຄຸມໄພພິບັດແຫ່ງຊາດ ແລະ ອຳນວຍຄວາມສະດວກໂດຍ ອົງການສະຫະປະຊາຊາດ, ທະນາຄານໂລກ ແລະ ສະຫະພາບ ເອີຣົບ.

ເພື່ອກະກຽມ ສຳລັບ ກອງປະຊຸມໂຕະມົນ ແລະ ໂດຍສະເພາະແມ່ນ ເພື່ອ ການຟື້ນຕົວຄືນ ຫຼັງຈາກໄພພິບັດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄະນະກຳມະການ ປ້ອງກັນໄພພິບັດ ແລະ ຄວບຄຸມໄພພິບັດແຫ່ງຊາດ ພ້ອມກັບ ກະຊວງ ແຜນການ ແລະ ການລົງທຶນ ໄດ້ຮຽກຮ້ອງ ໃຫ້ ມີກອງປະຊຸມປຶກສາຫາລືກ່ອນທີ່ ຈະມີການປຶກສາຫາລື ຂອງກອງປະຊຸມໂຕະມົນ ຢູ່ທີ່ ສູນປະຊຸມແຫ່ງຊາດ ໃນມື້ນີ້. ຈຸດປະສົງ ຂອງ ກອງປະຊຸມ ແມ່ນ ເພື່ອໃຫ້ ບັນດາອົງການຈັດຕັ້ງ ຂອງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ໄດ້ຮັບຮູ້ ການປັບປຸງຂໍ້ມູນ ກ່ຽວກັບ ຜົນໄດ້ຮັບ ຂອງ ການປະເມີນຄວາມຕ້ອງການ ພາຍຫຼັງໄພພິບັດ ແລະ ປຶກສາຫາລື ຂັ້ນຕອນຕໍ່ໄປຂອງ ຂະບວນການຟື້ນຕົວຄືນ ຫຼັງໄພພິບັດ. ໂດຍສະເພາະແລ້ວ ແມ່ນການ ເອົາໃຈໃສ່ ໃນບັນດາຂອບເຂດວຽກງານ ການຟື້ນຕົວຄືນ ຫຼັງຈາກໄພພິບັດ ເຊິ່ງຄາດວ່າ ຈະໄດ້ຮັບການສະຫຼຸບ

ໃນເດືອນ ໜ້າທີ່ຈະມາເຖິງນີ້. ຂອບເຂດວຽກງານ ການຟື້ນຕົວຄືນ ຫຼັງຈາກໄພພິບັດ ຈະໃຫ້ຄໍາແນະນໍາແກ່ ລັດຖະບານ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານການຟື້ນຕົວຄືນ ຫຼັງຈາກໄພພິບັດ ໃນໄລຍະກາງ ແລະ ໄລຍະຍາວ.

ອີງຕາມຕົວເລກທີ່ໄດ້ຖືກນໍາສະເຫນີຢູ່ໃນກອງປະຊຸມປຶກສາຫາລືກ່ອນ ກອງປະຊຸມໂຕະມົນ, ຄວາມເສຍຫາຍເບື້ອງຕົ້ນ ທົ່ວປະເທດ ແມ່ນ 1,253.10 ຕື້ກີບ (147 ລ້ານໂດລາ), ໃນຂະນະທີ່ການສູນເສຍ ໄລຍະຍາວ ທາງດ້ານ ການຜະລິດ ແລະ ລາຍໄດ້ ເພີ່ມຂື້ນເຖິງ 1,914.02 ຕື້ກີບ (224.5 ລ້ານໂດລາ). ຄວາມຕ້ອງການທົ່ວປະເທດໃນຂະບວນການ ການຟື້ນຕົວຄືນ ຫຼັງຈາກໄພພິບັດ ແມ່ນ ປະມານ 4,389.76 ຕື້ກີບ (514 ລ້ານໂດລາ). ບັນດາ ຂະແໜງການ ທີ່ໄດ້ຮັບຜົນກະທົບໜັກໜ່ວງທີ່ສຸດ ຈາກ ໄພພິບັດ ແມ່ນ ຂະແໜງການ ຂົນສົ່ງ, ກະສິກໍາ ແລະ ທາງນໍ້າໄຫຼ. ໃນ ກອງປະຊຸມ ປຶກສາຫາລືຂັ້ນນໍາ ຈັດ ໂດຍ ກະຊວງ ການຕ່າງປະເທດ ແລະ ສະຫະພາບເອີຣົບ, ຜູ້ຕາງຫນ້າຈາກກະຊວງ ການເງິນ, ກະຊວງ ແຜນການ ແລະ ການລົງທຶນ, ທະນາຄານໂລກ ແລະ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ ໄດ້ຄໍານຶງນໍາກັນວ່າຈະເຮັດແນວໃດ ເພື່ອໃຫ້ ວິທີການ ຂອງຂະບວນວຽກງານ ການຟື້ນຕົວຄືນ ຫຼັງຈາກໄພພິບັດ ມີປະສິດທິພາບທີ່ສຸດ ແລະ ມີການປະສານສົມທົບ ຫຼາຍທີ່ສຸດ ເທົ່າທີ່ຈະເປັນໄປໄດ້.

ບັນດາຫຼັກການພື້ນຖານ ທີ່ໄດ້ສະເຫນີ ສໍາລັບ ການສ້າງ ຂອບເຂດວຽກງານ ການຟື້ນຕົວຄືນ ຫຼັງຈາກໄພພິບັດ ປະກອບມີ ການຊ່ວຍເຫຼືອ ຊຸມຊົນ ໃຫ້ ມີຄວາມພ້ອມຫຼາຍກວ່າເກົ່າ ໃນການຮັບມື ຕໍ່ໄພພິບັດທີ່ກ່ຽວຂ້ອງກັບດິນຟ້າອາກາດ ໂດຍຜ່ານ ຫຼັກການພື້ນຖານຂອງ ວຽກງານການສ້າງຄືນໃໝ່ໃຫ້ດີກວ່າເກົ່າ, ໃຫ້ສອດຄ່ອງ ກັບ ເປົ້າຫມາຍ ແລະ ຍຸດທະສາດ ແຫ່ງຊາດ, ການຮັບມື ແບບ ມີການປະສານສົມທົບ ເພື່ອ ສ້າງ ຂອບເຂດວຽກງານ ການຟື້ນຕົວຄືນ ຫຼັງຈາກໄພພິບັດ, ການສ້າງຄວາມອາດສາມາດແບບຖາວອນ ໃນການ ຈັດການກັບຄວາມສ່ຽງຂອງໄພພິບັດຕ່າງໆ ແລະ ລວມເອົາ ໄພອັນຕະລາຍອື່ນໆ ຈາກທໍາມະຊາດ ທີ່ ຮ້າຍແຮງກ່ວາ ໄພນໍ້າຖ້ວມ ເພື່ອຫຼຸດຜ່ອນຄວາມສ່ຽງ. ຍຸດທະສາດການຟື້ນຕົວຄືນ ໄດ້ຮັບການສະຫນັບສະຫນູນໂດຍ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 8 ແລະ ອາເຈັນດາ ປີ 2030 ສໍາລັບ ການພັດທະນາແບບຍືນຍົງ ເຊິ່ງທັງສອງເອກະສານນີ້ໄດ້ ເນັ້ນໃສ່ການພັດທະນາແບບມີສ່ວນຮ່ວມ ແລະ ຄວາມສໍາຄັນ ຂອງການບໍ່ຖິ້ມປະໃຊໄວ້ເບື້ອງຫລັງ, ຍຸດທະສາດການຟື້ນຕົວຄືນ ຫຼັງຈາກໄພພິບັດ ຈະເນັ້ນໃສ່ກຸ່ມເປົ້າຫມາຍທີ່ມີຄວາມສ່ຽງໄພ ເຊັ່ນ: ແມ່ຍິງ ແລະ ເດັກນ້ອຍ. ຄະນະກໍາມະການດັ່ງກ່າວ ຍັງໄດ້ກວມເອົາ ຄໍາຖາມກ່ຽວກັບ ທຶນຮອນ ຂອງ ຂອບເຂດວຽກງານ ການຟື້ນຕົວຄືນ ຫຼັງຈາກໄພພິບັດ ແລະ ການເຊື່ອມໂຍງ ເຂົ້າໃນເຄິ່ງທີ່ສອງຂອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 8 ($8^{th}$ NSEDP) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ($9^{th}$ NSEDP).

ກົນໄກຂອງ ການປະຊຸມໂຕະມົນແຫ່ງຊາດ ທີ່ມີຢູ່ປະກອບດ້ວຍ 10 ໜ່ວຍງານຫຼັກ ແລະ ຂະແໜງການຍ່ອຍ 30 ຂະແໜງການ ຈະສະໜັບສະໜູນການປະສານງານ ຂອງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບ ວຽກງານການຟື້ນຕົວຄືນ ຫຼັງຈາກໄພພະບັດ.

ຫຼາຍໆຕົວຢ່າງ ຂອງ ການຟື້ນຕົວຄືນ ຫຼັງຈາກໄພພິບັດ ທີ່ໄດ້ດຳເນີນ ຢູ່ໃນ ບັນດາປະເທດອື່ນໆ ໃນພາກພື້ນ ໄດ້ຖືກແບ່ງປັນ ໃຫ້ແກ່ ບັນດາຜູ້ເຂົ້າຮ່ວມທັງຫຼາຍ. ໃນຂະນະເວລາການປຶກສາຫາລື, ບັນດາກຳມະການ ໄດ້ບອກໃຫ້ຮູ້ເຖິງວິທີການຈັດຕັ້ງປະຕິບັດຕ່າງໆທີ່ປະສົບຜົນສຳເລັດ ໃນຕ່າງປະເທດ ສາມາດດຳເນີນໄດ້ ຢູ່ໃນ ສ.ປ.ປ. ລາວ. ມັນຍັງມີຄວາມເຫັນດີນຳກັນວ່າ ຄວນມີການນຳໃຊ້ບົດຮຽນ ທີ່ໄດ້ຮຽນຮູ້ມາ ຈາກ ການປະເມີນຄວາມຕ້ອງການ ຫຼັງໄພພິບັດໄຕ້ຝຸ່ນຕ່າງໆ ໃນ ສ.ປ.ປ. ລາວ ເຊິ່ງໄດ້ດຳເນີນ ໃນປີ 2009 ແລະ 2011 ຕາມລຳດັບ.

**ສຳລັບຂໍ້ມູນເພີ່ມເຕີມກະລຸນາເຂົ້າເບິ່ງເວັບໄຊທ໌ໄດ້ຕະຫຼອດທີ່:** http://rtm.org.la

**ສຳລັບຂໍ້ມູນເພີ່ມເຕີມ ກະລຸນາ ຕິດຕໍ່:**

ທ່ານ. ມໍລະກົດ ວົງໄຊ, ກົມ ຮ່ວມມືສາກົນ, ກະຊວງ ແຜນການ ແລະ ການລົງທຶນ,
ໂທ: +856 2244 8892 ອີເມວ: k_vongxay@hotmail.com

ທ່ານ. ວິໄລພົງ ສີສົມຫວັງ, ກອງເລຂາ ຄະນະກຳມະການ ປ້ອງກັນໄພພິບັດ ແລະ ຄວບຄຸມໄພພິບັດແຫ່ງຊາດ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ໂທ +856 021 213 005, ອີເມວ: vilayphongs@gmail.com

ທ່ານນາງ. Ildiko Hamos-Sohlo, ຜູ້ຊ່ຽວຊານດ້ານການສື່ສານ, ອົງການສະຫະປະຊາຊາດ ປະຈຳ ສ.ປ.ປ. ລາວ. ໂທ +856 021 267 778, ມືຖື: +856 020 7717 7913 ອີເມວ: ildikohamos@oneun.org